# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 23 ມິຖຸນາ 2024 (06-23-2024)

---

## ພຣະສັນຍາຂອງພຣະເຈົ້າທີ່ຈະສ້າງປະເທດຊາດບໍຣິສຸດ

**ຈຸດສຳຄັນໃນບົດຮຽນ:** ພຣະສັນຍາຂອງພຣະເຈົ້າທີ່ຈະຕັ້ງປະຊາຊົນຂອງພຣະອົງຂຶ້ນຢູ່ກັບການເຊື່ອຟັງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

<u>ມັກຫຼືບໍ່ມັກ</u>, <u>ກົດຣະບຽບເປັນສ່ວນນຶ່ງຂອງຊີວິດ</u>. ພວກເຮົາສ່ວນໃຫຍ່ຕອນທີ່ເປັນເດັກນ້ອຍອາດຈະໄດ້ຈັບມືພໍ່ແມ່ເມື່ອພວກເຮົາຍ່າງຂ້າມຖນົນຫຼືຜ່ານບ່ອນຈອດຣົດ. ພໍ່ແມ່ຂອງພວກເຮົາມີກົດຣະບຽບສຳລັບພວກເຮົາເພາະວ່າພວກເພິ່ນຢາກໃຫ້ພວກເຮົາປອດພັຍ. ໃນເວລານັ້ນ, ພວກເຮົາອາດຈະຄິດວ່າກົດຣະບຽບເປັນການຈຳກັດເສຣີພາບຂອງພວກເຮົາ. ຂ້າພະເຈົ້າຍັງຈື່ມື້ທີ່ບໍ່ຕ້ອງຈັບມືແມ່ອີກເມື່ອຍ່າງຂ້າມຖນົນ. ຫຼາຍໆດ້ານຂອງຊີວິດຂອງພວກເຮົາມາພ້ອມກັບກົດຣະບຽບ. ສະຖານທີ່ທີ່ພວກເຮົາເຮັດວຽກມີຂັ້ນຕອນທີ່ພວກເຮົາຕ້ອງປະຕິບັດຕາມ. ພວກເຮົາມີກົດໝາຍຈະລາຈອນທີ່ບອກພວກເຮົາວ່າພວກເຮົາສາມາດຂັບຣົດໄວເທົ່າໃດໃນຖນົນຫົນທາງ, ເມື່ອໃດທີ່ພວກເຮົາຕ້ອງການຢຸດ, ແລະອື່ນໆອີກຫຼາຍຢ່າງ. ກິລາທີ່ພວກເຮົາມີສ່ວນຮ່ວມ, ເຊັ່ນເບສບານ(baseball) ຫຼືບານເຕະ(soccer)ຍັງມີກົດຣະບຽບ.

ບາງຄັ້ງຜູ້ຄົນຈົ່ມກ່ຽວກັບກົດຣະບຽບ, ແຕ່ວ່າພວກເພິ່ນຍັງເຊື່ອຟັງກົດຣະບຽບເຫຼົ່ານັ້ນ ເພາະວ່າພວກເຂົາເຈົ້າຮູ້ວ່າພວກເພິ່ນຈຳເປັນຕ້ອງເຊື່ອຟັງ <u>ເພື່ອເຮັດໃຫ້ຊີວິດດຳເນີນໄປໃນແນວທາງທີ່ສົມຄວນຈະເປັນ</u>. ພວກເຮົາສັດຊື່ຕໍ່ຕົນເອງ, ພວກເຮົາອາດຖືວ່າກົດຣະບຽບຂອງຊີວິດບາງຢ່າງມີຂໍ້ຈຳກັດເລັກໜ້ອຍ ຫຼືມີຂອບເຂດ. ແຕ່ເປັນທີ່ໜ້າເສົ້າໃຈ, ເມື່ອເວົ້າເຖິງຄວາມສັມພັນລະຫວ່າງພວກເຮົາກັບພຣະເຈົ້າ, ມີຜູ້ຄົນຈຳນວນຫຼາຍເກີນໄປເຫັນຄຳສັ່ງຂອງພຣະອົງວ່າເປັນຂອງ<u>**ລ້າສມັຍ**</u>, ຫຼືເປັນພຽງແຕ່<u>**ຄຳແນະນຳ**</u>ເທົ່ານັ້ນ. ຢ່າງໃດກໍຕາມ, ພຣະເຈົ້າຊົງມີພຣະປະສົງໃຫ້ພຣະບັນຊາ(ຄຳສັ່ງ)ຂອງພຣະອົງເປັນພຣະພອນແກ່ພວກເຮົາ ແລະ<u>**ໃນເມື່ອພວກເຮົາເຊື່ອຟັງພຣະບັນຊາຂອງພຣະອົງ**</u>, <u>**ພວກເຮົາຈະມີປະສົບການຊີວິດຢ່າງເຕັມທີ່**</u> <u>**ຢ່າງທີ່ມັນ(ຊີວິດ)ສົມຄວນຈະເປັນ.**</u>

*ເຕີບໃຫຍ່ຂຶ້ນ, ຄອບຄົວຂອງທ່ານມີກົດຣະບຽບອັນໃດແດ່ທີ່ທ່ານສັງເກດເຫັນວ່າບັນດາຄົນອື່ນບໍ່ມີ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ອົບພຍົບ 19:1-4</u>

*1 ໃນວັນທີນຶ່ງຂອງເດືອນທີສາມນັບແຕ່ຊາວອິສຣາເອນ ໄດ້ອອກຈາກປະເທດເອຢິບ ພວກເຂົາກໍໄດ້ເດີນທາງມາຮອດຖິ່ນແຫ້ງແລ້ງກັນ*
*ດານ ຊີນາຍ. 2 ເມື່ອອອກຈາກ ເຣຟີດິມ ມາເຖິງຖິ່ນແຫ້ງແລ້ງກັນດານ ຊີນາຍ ແລ້ວພວກເຂົາໄດ້ຕັ້ງຄ້າຍພັກເຊົາຢູ່ທີ່ຕີນພູເຂົາຊີນາຍ.*
*3 ແລ້ວໂມເຊໄດ້ຂຶ້ນໄປເທິງພູເພື່ອເຂົ້າເຝົ້າພຣະເຈົ້າ. ພຣະຜູ້ເປັນເຈົ້າຊົງເອີ້ນຈາກພູມາຫາໂມເຊວ່າ, "ຈົ່ງບອກເຊື້ອສາຍຢາໂຄບແລະ*
*ບອກຊາວອິສຣາເອນດັ່ງນີ້. 4 ພວກເຈົ້າໄດ້ເຫັນສິ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງກະທຳຕໍ່ຊາວເອຢິບ ແລ້ວພຣະອົງໄດ້ຊົງຍົກພວກເຈົ້າຂຶ້ນ*
*ເໝືອນນົກອິນຊີຍົກລູກຂຶ້ນດ້ວຍປີກຂອງມັນເພື່ອນຳພວກເຈົ້າມາຫາພຣະອົງ.*

ເພງນະມັສການເກົ່າໄດ້ທ້າທາຍພວກເຮົາວ່າ: "ຈົ່ງນັບພຣະພອນຂອງພວກທ່ານ, ຕັ້ງຊື່ພຣະພອນເຫຼົ່ານັ້ນເທື່ອລະອັນ, ແລະພຣະພອນນັ້ນຈະເຮັດໃຫ້ທ່ານແປກໃຈໃນສິ່ງທີ່ພຣະຜູ້ເປັນເຈົ້າໄດ້ຊົງກະທຳ." ຈົ່ງພິຈາລະນາບາງພຣະພອນທີ່ຍິ່ງໃຫຍ່ທີ່ສຸດຂອງພຣະເຈົ້າ

ໃນຊີວິດຂອງທ່ານ, ບາງທີອາດຈະເປັນບ້ານເຮືອນ, ຄຣິສຕະຈັກ, ແລະວຽກເຮັດງານທຳ. ສິ່ງເຫຼົ່ານີ້ແມ່ນເປັນສິ່ງທີ່ດີທັງໝົດແຕ່ມັນບໍ່ແມ່ນພຣະພອນທີ່ດີທີ່ສຸດທີ່ພຣະເຈົ້າໄດ້ຊົງມອບໃຫ້ພວກເຮົາ. **ພຣະພອນທີ່ດີທີ່ສຸດແມ່ນພຣະອົງໄດ້ຊົງປະທານພຣະອົງເອງໃຫ້ກັບພວກເຮົາ**. ພຣະເຈົ້າໄດ້ຊົງສະຖາປະນາຄວາມສັມພັນສ່ວນພຣະອົງກັບພວກເຮົາໂດຍພຣະຄຸນຜ່ານທາງຄວາມເຊື່ອໃນພຣະບຸດຂອງພຣະອົງ ຄື **ພຣະເຢຊູຄຣິດ**. ພຣະເຈົ້າ, ໂດຍຜ່ານທາງ ໂມເຊ, ໄດ້ຊົງທ້າທາຍປະຊາຊົນຊາວອິສຣາເອນ ໃຫ້ຈົດຈຳສິ່ງທີ່ພຣະອົງໄດ້ຊົງກະທຳເພື່ອພວກເພິ່ນ:

- ພຣະອົງໄດ້ຊົງຊ່ວຍພວກເຂົາເຈົ້າໃຫ້ພົ້ນຈາກການຕົກເປັນທາດຂອງຊາວ ເອຢິບ ຫຼາຍກວ່າ 400 ປີ.
- ພຣະເຈົ້າໄດ້ຊົງແຍກນ້ຳທະເລ, ເພື່ອໃຫ້ປະຊາຊົນຂອງພຣະອົງສາມາດຂ້າມໄປເຖິງພື້ນທີ່ແຫ້ງແລ້ງ. ພຣະອົງໄດ້ຊົງເຮັດໃຫ້ກອງທັບເອຢິບຈົມນ້ຳຕາຍໂດຍປິດທະເລໃສ່ພວກເຂົາ.
- ພຣະອົງໄດ້ຊົງຈັດຫາ ມານາ(manna)ປະຈຳວັນໃນຖິ່ນແຫ້ງແລ້ງທຸລະກັນດານໃຫ້ແກ່ພວກເຂົາເຈົ້າ.
- ພຣະອົງໄດ້ໃຫ້ພວກເຂົາເຈົ້າມີຊັຍຊະນະເໜືອຊາວອາມາເລັກ.

ພຣະຄັມພີເຕັມໄປດ້ວຍລາຍຊື່ຂອງຄົນທັມມະດາທີ່ພຣະເຈົ້າຊົງໃຊ້ໃນທາງທີ່ພິເສດ(ບໍ່ທັມມະດາ), ເມື່ອພວກເພິ່ນຍອມຈຳນົນຊີວິດຂອງພວກເຂົາເຈົ້າເພື່ອພຣະອົງ:

1. **ອັບຣາມ** ໄດ້ກາຍເປັນບັນພະບຸຣຸດຂອງຜູ້ຄົນທີ່ພຣະເຈົ້າຊົງເລືອກໄວ້ ແລະເປັນຕົວຢ່າງທີ່ດີຂອງຄວາມເຊື່ອ.
2. **ກິເດໂອນ** ມາຈາກຄອບຄົວນ້ອຍໆ ແຕ່ວ່າພຣະເຈົ້າໄດ້ຊົງໃຊ້ລາວເພື່ອເອົາຊະນະຊາວ ມີດີອານ.
3. **ຣູດ** ຜູ້ຍິງຊາວໂມອາບ, ໄດ້ຮັບໃຊ້ແມ່ຍ່າຂອງລາວ-ນາໂອມີ-ດ້ວຍຄວາມສັດຊື່, ແຕ່ພຣະເຈົ້າໄດ້ຊົງປະທານສາມີໃຫ້ນາງ, ແລະໃນທີ່ສຸດນາງໄດ້ກາຍມາເປັນແມ່ຕູ້ຜູ້ຍິ່ງໃຫຍ່ຂອງກະສັດ ເດວິດ ແລະບັນພະບຸຣຸດຂອງພຣະເຢຊູ.
4. **ດາວິດ** ເປັນລູກຫຼ້າໃນພວກອ້າຍນ້ອງ 8 ຄົນ, ແຕ່ພຣະເຈົ້າໄດ້ຊົງແຕ່ງຕັ້ງເພິ່ນໃຫ້ເປັນກະສັດປົກຄອງຊາວອິສຣາເອນ.
5. **ເປໂຕ** ແລະ **ໂຢຮັນ** ເປັນຊາວປະມົງ(ຄົນຫາປາ)ທົ່ວໄປຕາມແຄມທະເລ ຄາລີເລ, ແຕ່ພຣະເຢຊູໄດ້ຊົງເອີ້ນພວກເພິ່ນໃຫ້ເປັນອັຄສາວົກຂອງພຣະອົງ, ແລະລະຫວ່າງພວກເຂົາເຈົ້າ ພວກເພິ່ນໄດ້ຂຽນພຣະຄັມພີ 7 ປຶ້ມໃນຈຳນວນ 27 ເຫຼັ້ມຂອງພຣະຄັມພີພຣະສັນຍາໃໝ່.

ພວກເຮົາບໍ່ສົມຄວນແກ້ຕົວເພື່ອຫຼີກລ້ຽງການຊົງຮຽກເອີ້ນຂອງພຣະເຈົ້າໃນຊີວິດຂອງພວກເຮົາ. ໂມເຊ ໄດ້ພຍາຍາມ, ແຕ່ມັນບໍ່ໄດ້ຜົນ (ອພຍ 3-4). ພຣະເຈົ້າຈະຊົງຈັດຕຽມໃຫ້ພວກເຮົາເຮັດສິ່ງທີ່ພຣະອົງຊົງຮຽກຮ້ອງໃຫ້ພວກເຮົາເຮັດ. ພຣະຜູ້ເປັນເຈົ້າກຳລັງຈະຊົງໃຫ້ຄຳສັ່ງແກ່ ໂມເຊ ໃຫ້ປະຊາກອນຂອງພຣະອົງປະຕິບັດຕາມ. ພຣະອົງໄດ້ຊົງບອກໂມເຊເຖິງຄວາມທ້າທາຍທີ່ພຣະອົງຈະຊົງກະທຳຕໍ່ໜ້າປະຊາກອນຂອງພຣະອົງ: "ພວກເຈົ້າໄດ້ເຫັນສິ່ງທີ່ພຣະຜູ້ເປັນເຈົ້າໄດ້ກະທຳຕໍ່ຊາວເອຢິບແລ້ວ"(ອພຍ 19:4) ເນັ້ນເຖິງວິທີທີ່ປະຊາຊົນຂອງພຣະອົງໄດ້ເຫັນການອັສຈັນຂອງພຣະອົງໃນປະເທດເອຢິບ ແລະໃນຖິ່ນແຫ້ງແລ້ງທຸລະກັນດານ. ພຣະເຈົ້າໄດ້ຊົງຢືນຢັນຕໍ່ປະຊາກອນຂອງພຣະອົງວ່າ: "ເຮົາໄດ້ຍົກພວກເຈົ້າຂຶ້ນເໝືອນນົກອິນຊີຍົກລູກຂຶ້ນດ້ວຍປີກຂອງມັນເພື່ອນຳພວກເຈົ້າມາຫາເຮົາເອງ." (ຂໍ້ 4). ສຳຄັນທີ່ສຸດ, ພຣະຜູ້ເປັນເຈົ້າຊົງໄດ້ຢືນຢັນວ່າພຣະອົງຊົງໄດ້ນຳເອົາປະຊາກອນຂອງພຣະອົງມາຫາພຣະອົງເອງ. ພຣະອົງໄດ້ຊົງປົດປ່ອຍພວກເຂົາເຈົ້າອອກຈາກການເປັນຂ້າທາດຂອງຊາວເອຢິບ ແລະໄດ້ຊົງຊ່ອຍເຫຼືອພວກເພິ່ນໃຫ້ຜ່ານພົ້ນຖິ່ນແຫ້ງແລ້ງທຸລະກັນດານ. ດັ່ງນັ້ນ, ພຣະອົງຈຶ່ງຊົງສາມາດຢືນຢັນຄວາມສັມພັນຂອງພຣະອົງກັບພວກເຂົາເຈົ້າໃນຖານະເປັນປະຊາຊາດທີ່ຫາກໍ່ເລີ້ມຕົ້ນໃໝ່. **ທີ່ສຳຄັນທີ່ສຸດເໜືອສິ່ງອື່ນໃດ, ພຣະອົງຈະຊົງປະທານໃຫ້ແກ່ພວກເພິ່ນໃນຖິ່ນແຫ້ງແລ້ງທຸລະກັນດານ ແລະໃນດິນແດນແຫ່ງພັນທະສັນຍາ, ພຣະເຈົ້າໄດ້ຊົງປະທານພຣະອົງເອງແກ່ປະຊາຊົນຂອງພຣະອົງ.**

*ການຈື່ຈຳການຈັດຕຽມໃຫ້ຂອງພຣະເຈົ້າໃນອາດີດຊ່ອຍຊີ້ນຳການຕັດສິນໃຈໃນອານາຄົດຂອງພວກເຮົາໄດ້ແນວໃດ?*

## 2. ອົບພະຍົບ 19:5-6

*5 ບັດນີ້ຖ້າພວກເຈົ້າເຊື່ອຟັງພຣະອົງ ແລະຮັກສາຄຳພັນສັນຍາຂອງພຣະອົງໄວ້ ພວກເຈົ້າກໍຈະໄດ້ເປັນໄພ່ພົນພິເສດຂອງພຣະອົງ.*
*6 ເຈົ້າທັງຫລາຍຈະໄດ້ເປັນປະໂລຫິດຜູ້ຮັບໃຊ້ພຣະອົງ ແລະເປັນໄພ່ພົນບໍຣິສຸດຂອງພຣະອົງ." ນີ້ແມ່ນຖ້ອຍຄຳທີ່ເຈົ້າຈະຕ້ອງບອກ*
*ຊາວອິສຣາເອນ.*

ຄຳວ່າ "ບັດນີ້" ຊຶ່ງເລີ້ມຕົ້ນຂໍ້ທີ່ 5 ຊີ້ບອກວ່າພຣະຜູ້ເປັນເຈົ້າຊົງມາເຖິງ "ແກ່ນແທ້" ຂອງສິ່ງທີ່ພຣະອົງຊົງມີພຣະປະສົງບອກບັນດາໄພ່ພົນຂອງພຣະອົງ. ໂຄງສ້າງຂອງພາສາເຮັບເຣີ("ຖ້າຫາກຟັງຢູ່ ທ່ານຈະໄດ້ຍິນ")ເນັ້ນໜັກເຖິງພຣະປະສົງຂອງພຣະເຈົ້າທີ່ຊົງຢາກໃຫ້ບັນດາປະຊາກອນຂອງພຣະອົງເອົາໃຈໃສ່ໃນຄຳສັ່ງຂອງພຣະອົງຢ່າງລະມັດລະວັງ. ໃນຄວາມເປັນຈິງ, ໂຄງສ້າງນີ້ບອກເໜືອໄປຈາກການແນະນຳການຟັງຢ່າງຕັ້ງໃຈຕໍ່ການເຊື່ອຟັງຢ່າງຈິງຈັງ. ພັນທະສັນຍາທີ່ພູເຂົາຊີນາຍ ບໍ່ໄດ້ເລີ່ມຕົ້ນຄວາມສັມພັນລະຫວ່າງພຣະເຈົ້າກັບປະຊາກອນຂອງພຣະອົງ ຊຶ່ງໄດ້ມີມານານແລ້ວ. ພຣະຜູ້ເປັນເຈົ້າໄດ້ຊົງສະຖາປະນາພັນທະສັນຍາຂອງພຣະອົງກັບ ອາດາມກ່ອນ, ແລ້ວຈຶ່ງຊົງທຳກັບ ໂນອາ. ຈາກນັ້ນພຣະອົງໄດ້ຊົງສະຖາປະນາພັນທະສັນຍາຂອງພຣະອົງກັບອັບຣາຮາມ, ອີຊາກ, ແລະ ຢາໂຄບ. ມາບັດນີ້, ທີ່ພູຊີນາຍ, ພຣະອົງໄດ້ຊົງນຳພາປະຊາກອນຂອງພຣະອົງໄປສູ່ຄວາມເຂົ້າໃຈໃນພຣະອົງຢ່າງເລິກເຊິ່ງ. ພຣະບັນຊາຂອງພຣະອົງຈະແຍກປະຊາກອນຂອງພຣະອົງອອກໄປອີກເພື່ອພຣະປະສົງແລະພຣະສງ່າຣາສີຂອງພຣະອົງ.

ການເຊື່ອຟັງຂອງພວກເຮົາຕໍ່ພຣະເຈົ້າສະທ້ອນໃຫ້ເຫັນຄວາມສັມພັນຂອງພວກເຮົາກັບພຣະອົງ ໃນຖານະເປັນສົມບັດພິເສດຂອງພຣະອົງ. ພຣະຜູ້ເປັນເຈົ້າໄດ້ຊົງບອກຊາວອິສຣາເອນວ່າພວກເພິ່ນເປັນສົມບັດພິເສດຂອງພຣະອົງ ແມ້ວ່າຜູ້ຄົນແລະປະຊາຊາດທັງໝົດເທິງແຜ່ນດິນໂລກນີ້ເປັນຂອງພຣະອົງຢູ່ແລ້ວກໍຕາມ. ພຣະເຈົ້າໄດ້ຊົງບອກໂມເຊໃຫ້ບອກຊາວອິສຣາເອນວ່າ ຖ້າຫາກພວກເຂົາເຈົ້າປະຕິບັດຕາມພຣະບັນຊາຂອງພຣະອົງຢ່າງສັດຊື່, ພວກເຂົາເຈົ້າຈະເປັນ "ອານາຈັກແຫ່ງປະໂຣຫິດ" ແລະ "ປະຊາຊາດບໍຣິສຸດ" (ຂໍ້ 6). ໃນເມື່ອພວກເຮົາໄດ້ຍິນຄຳວ່າ "ປະໂຣຫິດ" ມີຫຼາຍຮູບພາບເຂົ້າມາສູ່ໃຈ:
**(1) ສິດຍາພິບານ (a minister) ທີ່ເປັນສ່ວນນຶ່ງຂອງ ນິກາຍຕ່າງໆທາງສາສນາ. (2) ໃຜຜູ້ນຶ່ງທີ່ຖວາຍເຄື່ອງບູຊາແກ່ພຣະເຈົ້າ. (3) ໃຜຜູ້ນຶ່ງທີ່ດຳເນີນຊີວິດບໍຣິສຸດ(ສັກສິດ)ກວ່າຄົນອື່ນ(ຄົນທັມມະດາ).**

ຄວາມຄິດທັງໝົດເຫຼົ່ານີ້ມີຄວາມຈິງທີ່ແນ່ນອນສຳລັບພວກເຂົາເຈົ້າ, ແຕ່ຄວາມໝາຍພື້ນຖານຕາມພຣະຄັມພີ ພັນທະສັນຍາເດີມ ຂອງ ຄຳວ່າ "ປະໂຣຫິດ" ແມ່ນ "ຜູ້ກາງ" ("mediator"). ບັນດາປະໂຣຫິດທຳໜ້າທີ່ເປັນຜູ້ໄກ່ເກັ່ງລະຫວ່າງພຣະເຈົ້າແລະປະຊາກອນຂອງພຣະອົງ. ພວກເຂົາເຈົ້າເປັນຕົວແທນຂອງພຣະເຈົ້າຕໍ່ຜູ້ຄົນ ແລະຊີ້ນຳຜູ້ຄົນໃນການເຮັດຕາມຄຳສັ່ງຂອງພຣະເຈົ້າ. ພວກເພິ່ນຍັງໄດ້ເປັນຕົວແທນຂອງຜູ້ຄົນຕໍ່ພຣະເຈົ້າ ແລະໄດ້ສເນີຄຳອະທິຖານແລະການຖວາຍຕໍ່ພຣະເຈົ້າແທນພວກເຂົາເຈົ້າ.

ໃນພຣະຄັມພີພັນທະສັນຍາເດີມ, ມີແຕ່ສະມາຊິກເພດຊາຍຂອງຊົນເຜົ່າ ເລວີ ເທົ່ານັ້ນທີ່ຜ່ານເຊື້ອສາຍຂອງ ອາໂຣນ ເຮັດໜ້າທີ່ເປັນປະໂຣຫິດ. ເຖິງຢ່າງໃດກໍຕາມ, ອັຄສາວົກ ເປໂຕ ໄດ້ບອກບັນດາຜູ້ຟັງວ່າ ຜູ້ທີ່ເຊື່ອໃນທຸກມື້ນີ້ເປັນພາກສ່ວນຂອງຖານະປະໂຣຫິດຂອງພຣະເຈົ້າແລະປະຊາຊາດອັນບໍຣິສຸດຂອງພຣະອົງ(1 ປຕ 2:9). ພວກເຮົາຈຳເປັນຕ້ອງນຳພຣະຄຳຂອງພຣະເຈົ້າໄປສູ່ໂລກທີ່ຕ້ອງການໄດ້ຍິນ ແລະນຳຄົນບາບທີ່ກັບໃຈມາຫາພຣະເຈົ້າເພື່ອຄວາມລອດພົ້ນ. ພວກເຮົາຍັງສາມາດຊີ້ໃຫ້ຜູ້ຄົນໄປຫາພຣະເຈົ້າໂດຍຜ່ານການດຳເນີນຊີວິດອັນສັກສິດ(ບໍຣິສຸດ)ຂອງພວກເຮົາ. **ຜູ້ຄົນຈຳນວນຫຼວງຫຼາຍໃນໂລກກຳລັງຊອກຫາຕົວຢ່າງຂອງຄວາມຊອບທັມ** -ບັນດາຜູ້ຄົນທີ່ດຳເນີນຊີວິດເພື່ອຈຸດປະສົງທີ່ສູງກວ່າຕົນເອງ.

*ພວກເຮົາຈະໄດ້ຮັບປໂຍດແນວໃດໂດຍການດຳເນີນຊີວິດທີ່ບໍຣິສຸດ?*

## 3. **ອົບພະຍົບ 19:7-8**

*7 ດັ່ງນັ້ນ ໂມເຊ ຈຶ່ງໄປເອີ້ນພວກຫົວໜ້າປະຊາຊົນມາພ້ອມກັນ ແລະບອກສິ່ງທັງປວງທີ່ພຣະເຈົ້າຊົງກ່າວສູ່ພວກເຂົາຟັງ. 8 ແລ້ວປະຊາ*
*ຊົນໄດ້ຕອບພ້ອມກັນວ່າ "ທຸກສິ່ງທີ່ພຣະຜູ້ເປັນເຈົ້າຊົງບອກນັ້ນ ພວກຂ້ານ້ອຍຈະເຮັດຕາມ" ໂມເຊຈຶ່ງກາບທູນພຣະຜູ້ເປັນເຈົ້າຕາມທີ່*
*ປະຊາຊົນໄດ້ຕອບ.*

ໂມເຊໄດ້ກັບມາຈາກການພົບກັບພຣະເຈົ້າຢູ່ເທິງພູເຂົາ ແລະໄດ້ພົບກັບພວກເຖົ້າແກ່ຂອງຊາວອິສຣາເອນ. ໂມເຊບໍ່ສາມາດເຮັດພັນທະສັນຍາກັບພຣະເຈົ້າດ້ວຍຕົວເອງ. ປະຊາຊົນຂອງພຣະເຈົ້າຈຳເປັນຕ້ອງເຫັນດີນຳ ແລະການອະນຸມັດຈາກບັນດາເຖົ້າແກ່ເປັນຂັ້ນຕອນທຳອິດ.

*ແມ່ນຫຍັງຄືການທ້າທາຍທີ່ພວກເຮົາຜະເຊີນໜ້າຢູ່ໃນການເຊື່ອຟັງພຣະເຈົ້າ?*

ຄຳວ່າການເຊື່ອຟັງຂອງຜູ້ຄົນແມ່ນຢູ່ໃນກົດໝາຍທີ່ພຣະເຈົ້າຈະຊົງປະທານໃຫ້ແກ່ໂມເຊ ແລະໄດ້ສລຸບຢ່າງດີໃນສິ່ງທີ່ພວກເຮົາເອີ້ນວ່າ **ພຣະບັນຍັດສິບປະການ** (ອພຍ 20:1-17). ພຣະບັນຍັດ **4** ຂໍ້ທຳອິດກ່ຽວກັບຄວາມສັມພັນຂອງປະຊາຊົນກັບພຣະເຈົ້າ:
**(1)** ພວກເຈົ້າຢ່າມີພະ(gods)ອື່ນ ນອກຈາກເຮົາ-ອົງພຣະຜູ້ເປັນເຈົ້າ(God). **(2)** ພວກເຈົ້າຢ່າເຮັດຮູບໂຄລົບສຳລັບຕົນ. **(3)** ພວກເຈົ້າຢ່າໃຊ້ຊື່ພຣະຜູ້ເປັນເຈົ້າຂອງເຈົ້າໄປໃນທາງທີ່ຜິດ. **(4)** ພວກເຈົ້າຈົ່ງນັບຖືວັນຊະບາໂຕ ແລະຍຶດຖືໄວ້ເປັນວັນສັກສິດ. ພຣະບັນຍັດ **6** ຂໍ້ສຸດທ້າຍກ່ຽວກັບຄວາມສັມພັນຂອງປະຊາຊົນກັບຄົນອື່ນ:
**(5)** ພວກເຈົ້າຈົ່ງນັບຖືບິດາມານດາຂອງເຈົ້າ. **(6)** ພວກເຈົ້າຢ່າຂ້າຄົນ. **(7)** ພວກເຈົ້າຢ່າລ່ວງເກີນຜົວເມັຽຜູ້ອື່ນ. **(8)** ພວກເຈົ້າຢ່າລັກຊັບ. **(9)** ພວກເຈົ້າຢ່າເປັນພະຍານເທັດໃສ່ຮ້າຍເພື່ອນບ້ານຂອງຕົນ. **(10)** ພວກເຈົ້າຢ່າໄດ້ໂລບເອົາເຮືອນຊານບ້ານຊ່ອງຂອງເພື່ອນບ້ານຂອງເຈົ້າ. ພຣະຄັມພີພຣະສັນຍາໃໝ່ ຍັງຢືນຢັນວ່າພວກເຮົາ, ປະຊາຊົນຂອງພຣະເຈົ້າໃນທຸກມື້ນີ້, ບໍ່ສາມາດຕອບສນອງຄວາມຮຽກຮ້ອງຕ້ອງການຂອງກົດໝາຍ. ພວກເຮົາມັກຈະລົ້ມເຫຼວຈາກພຣະເຈົ້າ ແຕ່ວ່າອົງ**ພຣະເຢຊູຄຣິດ**-ພຣະບຸດຂອງພຣະເຈົ້າຊົງໄດ້ຕອບສນອງຂໍ້ຮຽກຮ້ອງຕ້ອງການຂອງກົດໝາຍສຳລັບພວກເຮົາ (ໂຣມ 8:1-4). ໃນເມື່ອພວກເຮົາໄຕ່ຕອງເຖິງພຣະພອນທັງໝົດຂອງພຣະເຈົ້າໃນອາດີດທີ່ມີຕໍ່ພວກເຮົາ, ພວກເຮົາຈະເຫັນໄດ້ດີກວ່າ ວ່າເປັນຫຍັງພຣະອົງຈຶ່ງຊົງມີພຣະປະສົງແຍກພວກເຮົາອອກຈາກກັນເພື່ອສງ່າຣາສີຂອງພຣະອົງ. **ພວກເຮົາຮັບໃຊ້ເປັນປະໂຣຫິດຂອງພຣະອົງ, ເປັນຕົວແທນຂອງພຣະອົງຕໍ່ໂລກ ແລະເຮັດໜ້າທີ່ເປັນເຄື່ອງມືຂອງພຣະອົງ ເພື່ອໃຫ້ໂລກຄືນດີກັບພຣະອົງ** (2 ກຣທ 5:20).

*ພວກທີ່ເຊື່ອສາມາດຊ່ວຍພວກເຮົາໃຫ້ເຊື່ອຟັງພຣະເຈົ້າໄດ້ຢ່າງໃດ?*

## ນຳໃຊ້ໃນຊີວິດ

ພຣະສັນຍາຂອງພຣະເຈົ້າທີ່ຈະຕັ້ງປະຊາຊົນຂອງພຣະອົງຂຶ້ນຢູ່ກັບການເຊື່ອຟັງ. ຈົ່ງໃຊ້ນິ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງຊອກຫາຢ່າງໜ້ອຍສີ່ວິທີທີ່ພຣະເຈົ້າໄດ້ຊົງກະທຳການເພື່ອນຳທ່ານມາຫາພຣະອົງເອງ.** ຈົ່ງໃຊ້ເວລາໃນການອະທິຖານ, ຈົ່ງຂອບພຣະຄຸນພຣະອົງສຳລັບການຊົງນຳພາທ່ານໄປຕລອດຊີວິດຂອງທ່ານ.
- **ຈົ່ງຊອກຫາຢ່າງໜ້ອຍສີ່ວິທີທີ່ທ່ານສາມາດດຳເນີນຊີວິດໃນຖານະເປັນປະໂຣຫິດຂອງພຣະເຈົ້າໃນໂລກຂອງທ່ານທຸກມື້ນີ້.** ຈົ່ງມອບວິທີເຫຼົ່ານັ້ນຕໍ່ພຣະເຈົ້າໃນການອະທິຖານ, ຈົ່ງຍອມຢູ່ໃນແຜນການ ແລະ ອຳນາດຂອງພຣະອົງ.
- **ຈົ່ງຈື່ໄວ້ວ່າພັນທະສັນຍາຂອງພຣະເຈົ້າຊົງກຳນົດ(ຮຽກຮ້ອງ)ການເຊື່ອຟັງຂອງພວກເຮົາ.** ພວກເຮົາບໍ່ສາມາດຮັກສາພຣະບັນຊາຂອງພຣະເຈົ້າຢ່າງສົມບູນແບບ. ພວກເຮົາທຸກຄົນຕ້ອງການ ການເສັຽສລະຂອງພຣະເຢຊູຄຣິດສຳລັບຄວາມບາບຂອງພວກເຮົາ. ຢ່າງໃດກໍຕາມ, ຈົ່ງທູນຂໍໃຫ້ພຣະເຈົ້າຊົງຊ່ວຍທ່ານກຳນົດບ່ອນໃນຊີວິດຂອງທ່ານທີ່ທ່ານຕ້ອງການພຣະຄຸນຂອງພຣະເຈົ້າເພື່ອດຳເນີນຊີວິດທີ່ດີກວ່າ ໃນຖານະທີ່ເປັນພຍານຂອງພຣະອົງຕໍ່ໂລກ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**